on your side




# On Your Sideແມ່ນຫຍັງ?

**On Your Sideແມ່ນການບໍລິການການຊ່ວຍເຫຼືອ ແລະ ການລາຍງານສຳລັບຊຸມຊົນຄົນເອເຊຍຕາເວັນອອກ ແລະ ເອເຊຍຕາເວັນອອກສ່ຽງໃຕ້ຜູ້ທີ່ມີປະສົບການການປຽດເຊື້ອຊາດ ແລະ/ຫຼື ການກຽດຊັງໃນຮູບແບບອື່ນໆ ທົ່ວສະຫະລາຊາອານາຈັກ.**

ຖ້າວ່າທ່ານປະສົບກັບການຢຽດຊັນເຊື້ອຊາດ ແລະ/ຫຼື ຄວາມກຽດຊັງທີ່ມີຕໍ່ທ່ານໂດຍຕົງ ຫຼື ຄົນອື່ນໆທີ່ຖືກ, ຫຼື ຖືກເບິ່ງວ່າເປັນຄົນເອເຊຍຕາເວັນອອກ ແລະ ຄົນເອເຊຍຕາເວັນອອກສຽງໃຕ້, ພວກເຮົາພ້ອມທີ່ຈະຊ່ວຍເຫຼືອທ່ານ. ບໍ່ວ່າຈະເກີດຫຍັງຂຶ້ນກໍ່ຕາມ, ບໍ່ຈຳເປັນວ່າທ່ານຄິດວ່າມັນເປັນເລື້ອງເລັກນ້ອຍ ຫຼື ຄົນອື່ນຈະຄິດ, ທ່ານສົມຄວນໄດ້ຮັບການຟັງ ແລະ ດຳເນີນການຢ່າງຈິງຈັງ.

**On Your Sideປະກອບດ້ວຍ ສາຍດ່ວນໂທຟຣີຕະຫຼອດເວລາ 24/7 ແລະ ເວັບໄຊທ໌ທີ່ທ່ານສາມາດຂໍການຊ່ວຍເຫຼືອ, ເຂົ້າເຖິງແຫຼ່ງຊັບພະຍາກອນ ແລະ ຖ້າທ່ານຕ້ອງການ, ເຮັດບົດລາຍງານ.**

ທີມງານທີ່ເປັນມິດຂອງພວກເຮົາສາມາດເວົ້າໄດ້ຫຼາຍພາສາຂອງເອເຊຍຕາເວັນອອກ ແລະ ເອເຊຍຕາເວັນອອກສຽງໃຕ້ ແລະ ຜ່ານນາຍແປພາສາທີ່ເຊື່ອຖືໄດ້ສາມາດໃຫ້ການຊ່ວຍເຫຼືອແກ່ທ່ານໃນພາສາທີ່ທ່ານຕ້ອງການ.

ບໍ່ວ່າທ່ານຕ້ອງການຊອກຫາການບໍລິການໃຫ້ຄຳປຶກສາໃນພື້ນທີ່, ກັງວົນວ່າຈະເກີດຫຍັງຂຶ້ນຖ້າຫາກວ່າທ່ານຕິດຕໍ່ກັບຕຳຫຼວດ, ຫຼື ຂໍພຽງແຕ່ຕ້ອງການເວົ້າກັບໃຜຜູ້ໃດຜູ້ໜຶ່ງຜູ້ທີ່ຢູ່ຄຽງຂ້າງທ່ານ - ເຈົ້າໜ້າທີ່ສາຍດ່ວນ ແລະ ພະນັກງານໃຫ້ການຊ່ວຍເຫຼືອທີ່ໄດ້ຮັບການຝຶກອົບຮົມຂອງພວກເຮົາພ້ອມທີ່ຈະຊ່ວຍເຫຼືອທ່ານ.

# ພວກເຮົາສາມາດໃຫ້ການຊ່ວຍເຫຼືອທ່ານແນວໃດ?



# ຄຳສັນຍາຂອງພວກເຮົາ



**ຄວາມປອດໄພ ແລະ ຄວາມເປັນຢູ່ທີ່ດີຂອງທ່ານແມ່ນເປົ້າໝາຍທຸກສິ່ງທຸກຢ່າງທີ່ພວກເຮົາເຮັດ.ເວັ້ນເສຍແຕ່ມີຄວາມສ່ຽງພິເສດຕໍ່ຄວາມປອດໄພຂອງທ່ານ ຫຼື ຄວາມປອດໄພຂອງຄົນອື່ນໆ, ພວກເຮົາຈະບໍ່ບອກສິ່ງທີ່ທ່ານບອກພວກເຮົາກັບຄົນອື່ນໆໂດຍບໍ່ໄດ້ຮັບອະນຸຍາດຈາກທ່ານ.**

ຖ້າທ່ານບອກພວກເຮົາສິ່ງທີ່ເກີດຂຶ້ນກັບທ່ານ, ທ່ານໄດ້ຊ່ວຍໃນການສ້າງຮູບພາບປະສົມການຂອງຊຸມຊົນຄົນເອເຊຍຕາເວັນອອກ ແລະ ເອເຊຍຕາເວັນອອກສຽງໃຕ້ໃນສະຫະລາຊາອານາຈັກ.ຖ້າພວກເຮົາຮຽນຮູ້ກ່ຽວກັບສິ່ງທີ່ກຳລັງເກີດຂຶ້ນໄດ້ຫຼາຍເທົ່າໃດ ກໍ່ຈະເຮັດໃຫ້ພວກເຮົາປ້ອງການມັນໄດ້ຫຼາຍຂຶ້ນເທົ່ານັ້ນ.

## ຢ່າເກັບຄວາມທຸກໄວ້ແບບງຽບໆ
## ບອກພວກເຮົາໄດ້ຕະຫຼອດເວລາໂດຍບໍ່ເສຍຄ່າໃຊ້ຈ່າຍ

ກະລຸນາໂທຫາພວກເຮົາໄດ້ທີ່ —0808 801 0393

ກະລຸນາໂທຫາພວກເຮົາໄດ້ທີ່ —onyoursideuk.org

This service has been funded by the Department for Levelling Up Housing and Communities through the HKBN(O) Welcome Programme. The service is run by a consortium of charity and non-profit organisations and operates completely independently of the UK Government. Unless there is exceptional risk to your safety, or the safety of others, no data you share will ever be given to any other agency without your full and informed consent.

Department for Levelling Up, Housing & Communities